ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------------

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1029 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 02.06.2011.

# ແຈ້ງການ

ເຖິງ: ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ

ເລື່ອງ: ການລາຍງານສະພາບລາຄາສິນຄ້າ ປະຈຳອາທິດ ແລະ ປະຈຳເດືອນ

- ອີງຕາມດຳລັດ ສະບັບເລກທີ 474 /ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ການຄຸ້ມຄອງລາຄາສິນຄ້າຕົ້ນຕໍ ໂດຍສະເພາະອັນທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ ໃຫ້ມີຄວາມເປັນເຈົ້າການ ເຫັນໄດ້ປັດໃຈ ທີ່ພາໃຫ້ລາຄາສິນຄ້າໃດໜຶ່ງປ່ຽນແປງຂຶ້ນ ຫລື ລົງ ເພື່ອເປັນພື້ນຖານໃຫ້ແກ່ການວາງມາດຕະການດັດສົມ ທີ່ສອດຄ່ອງ ທັນກັບສະພາບການ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້ :

1. ຕິດຕາມ ເກັບກຳລາຄາສິນຄ້າ ຕາມທີ່ໄດ້ບົ່ງໄວ້ໃນ ຕາຕະລາງ 1 ແລະ 2 ໃຫ້ເປັນລະບົບຕໍ່ເນື່ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ໂດຍລວມຂອງລາຄາສິນຄ້າໃນແຂວງ, ໃນນີ້ :

- ສຳລັບຕາຕະລາງ 1 ແມ່ນໃຫ້ລາຍງານ ທຸກໆອາທິດ ໂດຍໃຫ້ລົງເກັບກຳເປັນປະຈຳທຸກວັນອັງຄານ ແລ້ວ ສົ່ງໃຫ້ກົມການຄ້າພາຍໃນ ໃນທຸກວັນພຸດຖັດມາ.
- ສຳລັບຕາຕະລາງ 2 ແມ່ນໃຫ້ລາຍງານທຸກໆເດືອນ ໂດຍໃຫ້ລົງເກັບກຳໃນອາທິດທີສອງຂອງເດືອນ ແລະ ສົ່ງໃຫ້ກົມການຄ້າພາຍໃນ ກ່ອນວັນທີ 20 ຂອງເດືອນ ;

ລາຍການສິນຄ້າໃນສອງຕາຕະລາງນີ້ ແມ່ນບໍ່ຕາຍຕົວ ແລະ ກົມຈະແຈ້ງ ການປ່ຽນແປງດັ່ງກ່າວໃຫ້ຊາບໃນແຕ່ລະໄລຍະ. (ຕາຕະລາງ 1 ແລະ 2 ຄັດຕິດມາພ້ອມນີ້).

ນອກຈາກ 2 ຕາຕະລາງຕາມທີ່ກ່າວມາໃນຂໍ້ 1 ນີ້ ຍັງຈະມີຕາຕະລາງເພີ່ມເຕີມ ອີກຈຳນວນໜຶ່ງ ຊຶ່ງຈະແຈ້ງໃຫ້ຊາບໃນພາຍຫຼັງ.

2. ລາຄາທີ່ລາຍງານໃນຕາຕະລາງ 1 ແລະ ຕາຕະລາງ 2 ຕ້ອງແມ່ນລາຄາສະເລ່ຍທີ່ປະກົດຕົວໃນ ທ້ອງຕະຫຼາດ ແລະ/ຫລື ຮ້ານຄ້າສຳຄັນຂອງແຂວງ.